ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ລັດວິສາຫະກິດລົດໄຟແຫ່ງຊາດລາວ

ເລກທີ 404 /ລລຟລ
ນະຄອນຫຼວງວຽງຈັນ ,ວັນທີ 10 ທັນວາ 2025

## ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດລົດໄຟແຫ່ງຊາດລາວ ໄດ້ນໍາໃຊ້ຮ່ວງເງິນແຜນງົບປະມານບໍລິຫານ ປີ 2025 ເພື່ອດໍາເນີນການຈັດຊື້ພາຫະນະລົດໄຟຟ້າ ຈໍານວນ 03 ຄັນ:

| ລ/ດ | ລາຍລະອຽດ | ຈໍານວນ |
|---|---|---|
| 1 | ລົດໄຟຟ້າ SUV, ກໍາລັງມໍເຕີ 160-190 kw, ໄລຍະທາງຕໍ່ການສາກ 500-620 ກມ, 5 ບ່ອນນັ່ງ, ຂັບເຄື່ອນລໍ້ຫຼັງ, ພວງມະໄລຊ້າຍເດີມ | 01 ຄັນ |
| 2 | ລົດໄຟຟ້າ Plugin Hybrid EV (SUV), ກໍາລັງມໍເຕີ 160-190 kw, ໄລຍະທາງຕໍ່ການສາກ ມໍເຕີ+ນໍ້າມັນ 900-1,100 ກມ, 5 ບ່ອນນັ່ງ, ຂັບເຄື່ອນລໍ້ຫຼັງ, ພວງມະໄລຊ້າຍເດີມ | 01 ຄັນ |
| 3 | ລົດໄຟຟ້າ SUV, ກໍາລັງມໍເຕີ 135-205 kw, ໄລຍະທາງຕໍ່ການສາກ 500 ກມ, 5 ບ່ອນນັ່ງ, ຂັບເຄື່ອນສີ່ລໍ້, ພວງມະໄລຊ້າຍເດີມ | 01 ຄັນ |

ເພື່ອມາຮັບໃຊ້ວຽກງານບໍລິຫານຂອງ ລັດວິສາຫະກິດລົດໄຟແຫ່ງຊາດລາວ. ໂດຍຂໍຖືເປັນກຽດຮຽນເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ເຂົ້າຮ່ວມເປີດຊອງຈັດຊື້ໃນຄັ້ງນີ້, ຮັບປະກັນລາຄາຕາມທີ່ສະເໜີໃນປຶ້ມປະມູນ 60 ວັນ ຫຼັງເປີດຊອງປະມູນ, ໄລຍະສະໜອງທັງໝົດແມ່ນ 45 ວັນ;

2. ການຈັດຊື້ໃນຄັ້ງນີ້ ຈະດໍາເນີນຕາມຂັ້ນຕອນ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019;
3. ບໍລິສັດ ຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດດ້ານການຈໍາໜ່າຍລົດໄຟຟ້າ ແລະ ໃບມອບພັນທະອາກອນປີ 2023 ຫຼື 2024 ທີ່ຖືກຕ້ອງຕາມກົດໝາຍ;
4. ບໍລິສັດຕ້ອງເຮັດໜັງສືເຈດຈໍານົງຍື່ນເອກະສານປະມູນ ໄດ້ທີ່ລັດວິສາຫະກິດລົດໄຟແຫ່ງຊາດລາວ(ສໍານັກງານໃຫຍ່), ສະຖານີລົດໄຟວຽງຈັນ(ຄໍາສະຫວາດ) ບ້ານຄໍາສະຫວາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 12 ທັນວາ 2025 ຫາ ວັນທີ: 15 ມັງກອນ 2026;

5. ໃບສະເໜີລາຄາໃຫ້ລະບຸຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນມູນຄ່າເພີ່ມ ພ້ອມທັງລາຍລະອຽດ ໂດຍລະບຸເປັນ 02 ສະກຸນ: ກີບ ແລະ ໂດລາ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ 16:00 ໂມງ ຂອງວັນທີ 15 ມັງກອນ 2026, ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນ ໄດ້ເປີດຊ້ອງໜ້າຄະນະກຳມະການຈັດຊື້ ລັດວິສາຫະກິດລົດໄຟແຫ່ງຊາດລາວ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງບໍລິສັດ;
7. ໃນວັນສຸກ ວັນທີ 16 ມັງກອນ 2026 ເວລາ 09:30 ໂມງ ແມ່ນມື້ເປີດຊອງປະມູນ ສະນັ້ນຜູ້ສະໜອງຕ້ອງມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມ ທີ່ຫ້ອງປະຊຸມລັດວິສາຫະກິດລົດໄຟແຫ່ງຊາດລາວ, ສະຖານີລົດໄຟວຽງຈັນ(ຄຳສະຫວາດ), ບ້ານຄຳສະຫວາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

- ❖ ເງື່ອນໄຂການຊຳລະ: ການຊຳລະຈະຈ່າຍເປັນງວດດຽວ 100% ຂອງມູນຄ່າລົດ ພາຍຫຼັງໄດ້ຮັບລົດ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.

ຮອງຜູ້ອຳນວຍການ
ຫົວໜ້າຄະນະ ຈັດຊື້-ຈັດຈ້າງ ພາຫະນະ

ລັດວິສາຫະກິດ ລົດໄຟແຫ່ງຊາດລາວ
LAO NATIONAL RAILWAY STATE ENTERPRISE
ນະຄອນຫຼວງວຽງຈັນ

ອານົງເດດ ເພັດໄກສອນ